ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ຫ້ອງວ່າການລັດຖະບານ

ເລກທີ 1422/ຫລບ.ກສສ

ນະຄອນຫຼວງວຽງຈັນ, ວັນທີ 1.8.2012

# ແຈ້ງການ

ຮຽນ: ທ່ານ ລັດຖະມົນຕີວ່າການ ກະຊວງ ກະສິກຳ ແລະ ປ່າໄມ້.

- ທ່ານ ລັດຖະມົນຕີວ່າການ ກະຊວງ ອຸດສາຫະກຳ ແລະ ການຄ້າ.
- ທ່ານ ລັດຖະມົນຕີວ່າການ ກະຊວງ ການເງິນ.
- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ.
- ທ່ານ ເຈົ້າແຂວງໆ ວຽງຈັນ.
- ທ່ານ ເຈົ້າແຂວງໆ ໄຊຍະບູລີ.
- ທ່ານ ເຈົ້າແຂວງໆ ຫຼວງພະບາງ.
- ທ່ານ ເຈົ້າແຂວງໆ ຊຽງຂວາງ.
- ທ່ານ ເຈົ້າແຂວງໆ ອຸດົມໄຊ.
- ທ່ານ ເຈົ້າແຂວງໆ ຫົວພັນ.
- ທ່ານ ເຈົ້າແຂວງໆ ຫຼວງນ້ຳທາ.
- ທ່ານ ເຈົ້າແຂວງໆ ບໍ່ແກ້ວ.
- ທ່ານ ເຈົ້າແຂວງໆ ຜົ້ງສາລີ.
- ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

ເລື່ອງ: ການຜັນຂະຫຍາຍຜົນກອງປະຊຸມເຜີຍແຜ່ບົດບັນທຶກກ່ຽວກັບຂໍ້ກຳນົດເງື່ອນໄຂ ການສົ່ງອອກໝາກສາລີ ສປປ ລາວ ໄປ ສປ ຈີນ.

- ອີງຕາມຍັດຕິກອງປະຊຸມເຜີຍແຜ່ບົດບັນທຶກກ່ຽວກັບຂໍ້ກຳນົດເງື່ອນໄຂການສົ່ງອອກໝາກສາລີ ສປປ ລາວ ໄປ ສປ ຈີນ ໃນວັນທີ 4 ກໍລະກົດ 2012 ຢູ່ແຂວງອຸດົມໄຊ.
- ອີງຕາມການຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ລົງວັນທີ 25/07/2012.

ຫ້ອງວ່າການລັດຖະບານ ຂໍຖືເປັນກຽດແຈ້ງມາຍັງທ່ານ ເພື່ອຊາບກ່ຽວກັບການຊີ້ນຳຂອງຂັ້ນເທິງ ໃນການຜັນຂະຫຍາຍຜົນກອງປະຊຸມເຜີຍແຜ່ບົດບັນທຶກກ່ຽວກັບຂໍ້ກຳນົດເງື່ອນໄຂການສົ່ງອອກໝາກສາລີ ສປປ ລາວ ໄປ ສປ ຈີນ ດັ່ງນີ້ : " 1/. ເຫັນດີໃຫ້ມີການຊຸກຍູ້ ແລະ ສົ່ງເສີມ ການສົ່ງອອກໝາກສາລີຂອງ ສປປ ລາວໄປ ສປ ຈີນ ຕາມມາດຖານເງື່ອນໄຂໃນການກວດກາສັດຕູພືດ ຕາມບົດບັນທຶກກ່ຽວກັບ ຂໍ້ກຳນົດເງື່ອນໄຂການກວດກາສັດຕູພືດສາລີກ່ອນນຳເຂົ້າ ສປ ຈີນ ລະຫວ່າງກະຊວງ ກະສິກຳ ແລະ ປ່າ

ໄມ້ ແຫ່ງ ສປປ ລາວ ແລະ ອົງການບໍລິຫານການຄຸ້ມຄອງ, ກວດກາຄຸນນະພາບ ແລະ ກັກກັນພືດ ແລະ ສັດ ແຫ່ງ ສປ ຈີນ ສະບັບ ລົງວັນທີ 10 ມັງກອນ 2012 ເພື່ອໃຫ້ການສົ່ງສາລີມີການພັດທະນາຢ່າງຍືນຍົງ.

2/. ມອບໃຫ້ກະຊວງ ກະສິກຳ ແລະ ປ່າໄມ້ ເປັນເຈົ້າການສົມທົບກັບຂະແໜງການກ່ຽວຂ້ອງ ແລະ ທ້ອງຖິ່ນ ດຳເນີນການ ດັ່ງນີ້ :

- ຄົ້ນຄວ້າ ແລະ ຂຶ້ນແຜນລະອຽດກ່ຽວກັບການສ້າງຫ້ອງວິໃຈຄຸນນະພາບ ແລະ ສັດຕູພືດ ຢູ່ດ່ານສາກົນ ຫຼື ຈຸດໃດໜຶ່ງທີ່ເໝາະສົມ ເພື່ອຮອງຮັບການສົ່ງອອກພືດອື່ນໆໄປ ສປ ຈີນ ໃນຕໍ່ໜ້າແລ້ວ ນຳສະເໜີລັດຖະບານພິຈາລະນາ.

- ຊີ້ນຳຂະແໜງການສາຍຕັ້ງຂອງຕົນ ຢູ່ທ້ອງຖິ່ນລົງຊຸກຍູ້ຊາວກະສິກອນຜູ້ປູກໝາກສາລີ ແລະ ຜູ້ປະກອບການສົ່ງອອກໃຫ້ປະຕິບັດຢ່າງເຂັ້ມງວດຂັ້ນຕອນຕ່າງໆ ຂອງບົດບັນທຶກຂໍ້ກຳນົດເງື່ອນໄຂການກວດກາສັດຕູພືດໝາກສາລີກ່ອນການສົ່ງອອກໄປ ສປ ຈີນ ໂດຍໃຫ້ສາມາດກຳໄດ້ເນື້ອທີ່ປູກ, ແນວພັນ, ການອົບແຫ້ງ, ການເກັບມ້ຽນການປຸງແຕ່ງ ແລະ ຜູ້ປະກອບການກ່ຽວກັບໝາກສາລີ ເພື່ອສົ່ງອອກ.

- ໃຫ້ເປັນເຈົ້າການສືບຕໍ່ປຶກສາຫາລືກັບ ສປ ຈີນ ເພື່ອເຊັນສັນຍາກ່ຽວກັບເງື່ອນໄຂການສົ່ງອອກພືດອື່ນໆຂອງ ສປປ ລາວ ໄປ ສປ ຈີນ ເຊັ່ນ: ເຂົ້າ, ກ້ວຍ, ມັນຕົ້ນ, ອ້ອຍ, ຊາ, ຢາງພາລາ ແລະ ອື່ນໆ.

3/. ໃຫ້ກະຊວງ ອຸດສາຫະກຳ ແລະ ການຄ້າ ອຳນວຍຄວບຄຸມ ແລະ ຊີ້ນຳຂະແໜງການສາຍຕັ້ງຂອງຕົນຢູ່ທ້ອງຖິ່ນ ເພື່ອຊ່ວຍຜູ້ປະກອບການທຸລະກິດສົ່ງອອກໝາກສາລີ ໃຫ້ປະຕິບັດຢ່າງເຂັ້ມງວດ ຕາມຂັ້ນຕອນຕ່າງໆຂອງບົດບັນທຶກຂໍ້ກຳນົດເງື່ອນໄຂການກວດກາສັດຕູພືດສາລີ ແລະ ບັນດາລະບຽບການສົ່ງອອກອື່ນໆໃຫ້ກະທັດລັດ, ເອກະສານໃດທີ່ປະເທດນຳເຂົ້າບໍ່ຕ້ອງການກໍ່ໃຫ້ຕັດອອກ, ພ້ອມກັນນັ້ນ ກໍ່ໃຫ້ເປັນເຈົ້າການສົມທົບກັບພາກສ່ວນກ່ຽວຂ້ອງຊ່ວຍດ້ານການຕະຫຼາດກັບ ສປ ຈີນ.

4/. ໃຫ້ກະຊວງ ການເງິນ ຊີ້ນຳຂະແໜງການສາຍຕັ້ງຂອງຕົນຢູ່ທ້ອງຖິ່ນເປັນຕົ້ນເຈົ້າໜ້າທີ່ພາສີປະຈຳເຂດ 1 ແລະ ເຂດ 2 ເພື່ອແນະນຳ ແລະ ອຳນວຍຄວາມສະດວກໃນການສົ່ງອອກໝາກສາລີຂອງຜູ້ປະກອບການທີ່ມີເງື່ອນໄຂ ແລະ ມາດຖານຄົບຖ້ວນຕາມບົດບັນທຶກກ່ຽວກັບເງື່ອນໄຂການສົ່ງອອກໝາກສາລີ ຂອງ ສປປ ລາວ ໄປ ສປ ຈີນ.

5/. ໃຫ້ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ແລະ ຂັ້ນແຂວງ ສັງລວມບັນດາບັນຊີຜູ້ປະກອບການທີ່ມີເງື່ອນໄຂ ແລະ ມາດຖານໃນການສົ່ງອອກສາລີໄປ ສປ ຈີນ ຕາມບົດບັນທຶກກ່ຽວກັບເງື່ອນໄຂການສົ່ງອອກໝາກສາລີ ສປປ ລາວ ໄປ ສປ ຈີນ ໃຫ້ຂະແໜງການປູກຝັງນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ເພື່ອສົ່ງໃຫ້ກົມປູກຝັງ, ກະຊວງ ກະສິກຳ ແລະ ປ່າໄມ້ ເພື່ອແຈ້ງໃຫ້ຝ່າຍ ສປ ຈີນ ໂດຍໃຫ້ສຳເລັດພາຍໃນທ້າຍເດືອນ ສິງຫາ 2012 ນີ້.

- ໃຫ້ຊີ້ນຳ ແລະ ແຈ້ງໃຫ້ຜູ້ປະກອບການທີ່ຢູ່ນະຄອນຫຼວງວຽງຈັນ ແລະ ບັນດາແຂວງພາກເໜືອຜູ້ທີ່ມີຈຸດປະສົງຢາກທຳການຄ້າຂາຍໝາກສາລີ ກັບ ສປ ຈີນ ຕ້ອງໄດ້ປະຕິບັດຂັ້ນຕອນ ທີ່ກະຊວງກະສິກຳ ແລະ ປ່າໄມ້, ກະຊວງ ອຸດສາຫະກຳ ແລະ ການຄ້າ ແລະ ລະບຽບການອື່ນໆ ທີ່ຕິດພັນກັບການສົ່ງອອກຢ່າງເຂັ້ມງວດເປັນຕົ້ນ ຕ້ອງເປັນເຈົ້າການຈັດຕັ້ງເປັນກຸ່ມ, ເປັນສະມາຄົມ ຫຼື ກ້າວໄປເຖິງສະຫະກອນຜູ້ຜະລິດ-ປຸງແຕ່ງ ແລະ ສົ່ງອອກໝາກສາລີຂອງ ສປປ ລາວ ໄປ ສປ ຈີນ ເພື່ອໃຫ້ຜູ້ປະກອບການເຂັ້ມແຂງ, ສາມາດຂຶ້ນທະບຽນໄດ້ ແລະ ເຮັດໄດ້ຕາມມາດຖານທີ່ໄດ້ຖືກກຳນົດໄວ້.

6/. ໃນການຈັດຕັ້ງຜັນຂະຫຍາຍບົດບັນທຶກດັ່ງກ່າວນີ້ ຫາກພົບກັບຄວາມຫຍຸ້ງຍາກຍ້ອນການແບ່ງຄວາມຮັບຜິດຊອບບໍ່ຈະແຈ້ງ ຫຼື ແບ່ງບໍ່ທັນໝົດ ຫຼື ບັນຫາອື່ນໆ ແມ່ນມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການເຊີນພາກສ່ວນກ່ຽວຂ້ອງມາປຶກສາຫາລື ແລະ ຫາວິທີແກ້ໄຂໃຫ້ລະອຽດ."

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ພິຈາລະນາຕາມລະບຽບການ ແລະ ກົດໝາຍກ່ຽວຂ້ອງດ້ວຍ.

ລັດຖະມົນຕີ, ຫົວໜ້າຫ້ອງວ່າການລັດຖະບານ

ບ່ອນນຳສົ່ງ:

- ທ່ານ ນາຍົກ, ບັນດາທ່ານ ຮອງນາຍົກ 05 ສະບັບ.
- ຫ້ອງວ່າການສູນກາງພັກ 01 ສະບັບ.
- ຮອງ ຫົວໜ້າ ຫລບ 02 ສະບັບ.
- ກົມສັງລວມເສດຖະກິດ 01 ສະບັບ.
- ເກັບມ້ຽນ 06 ສະບັບ.

ດຣ. ສົມລົດ ...